ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 1323 /ຈນວ

ລົງວັນທີ: 21 ທັນວາ 2018

# ຂໍ້ຕົກລົງ
# ວ່າດ້ວຍມາດຕະການຫຼຸດຜ່ອນອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນ ທົ່ວນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ມາດຕາ 14, 19 ຂອງກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012; ມາດຕາ 22 ຂອງກົດໝາຍວ່າດ້ວຍທາງຫຼວງ ສະບັບເລກທີ 03/ສພຊລົງວັນທີ 08 ພະຈິກ 2016; ມາດຕາ 30, 55 ຂອງກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສະບັບເລກທີ 54/ສພຊ ລົງວັນທີ 19 ທັນວາ 2014;
- ອີງຕາມ ມະຕິກອງປະຊຸມຮ່ວມ ລະຫວ່າງນະຄອນຫຼວງວຽງຈັນ ກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງໂຍທາທິການ ແລະ ຂົນສົ່ງ ລົງວັນທີ 17 ພຶດສະພາ 2018;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I ລົງວັນທີ 16-18 ກໍລະກົດ 2018, ສະບັບເລກທີ 028/ສປນວ, ລົງວັນທີ 06 ກັນຍາ 2018.

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດເປົ້າໝາຍ, ເງື່ອນໄຂ ແລະ ມາດຕະການຫຼຸດຜ່ອນອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນ ຢູ່ນະຄອນຫຼວງວຽງຈັນ ຕາມກົດໝາຍກ່ຽວຂ້ອງກຳນົດໄວ້ ເພື່ອຮັບປະກັນຊີວິດ, ຊັບສິນ ຂອງພົນລະເມືອງ, ເຮັດໃຫ້ເມືອງຫຼວງມີຄວາມສະຫງົບສຸກ ແລະ ສັງຄົມມີຄວາມປອດໄພ.

**ມາດຕາ 2 ນິຍາມ.**

ມາດຕະການຫຼຸດຜ່ອນອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນ ຢູ່ນະຄອນຫຼວງວຽງຈັນ ຕາມຂໍ້ຕົກລົງສະບັບນີ້ ແມ່ນເຄື່ອງມື ແລະ ຕົວຊີ້ວັດຂອງການຈັດຕັ້ງປະຕິບັດລະບຽບການ ແລະ ກົດໝາຍ ທີ່ຈະຊ່ວຍຫຼຸດອຸປະຕິເຫດ ແລະ ຮັບປະກັນຄວາມປອດໄພຕາມຖະໜົນ.

**ມາດຕາ 3 ເປົ້າໝາຍແກ້ໄຂອຸປະຕິເຫດ ແລະ ຮັກສາຄວາມປອດໄພຕາມຖະໜົນ.**

- ເປົ້າໝາຍທີ 1: ຍານພາຫະນະ ທີ່ນຳໃຊ້ເຂົ້າໃນການຈະລາຈອນ.
- ເປົ້າໝາຍທີ 2: ຜູ້ຂັບຂີ່ຍານພາຫະນະ.
- ເປົ້າໝາຍທີ 3: ຜູ້ໂດຍສານ.
- ເປົ້າໝາຍທີ 4: ຜູ້ດຳລົງຊີວິດ ແລະ ເຄື່ອນໄຫວຕາມແຄມທາງ.

- ເປົ້າໝາຍທີ 5: ຜູ້ກໍ່ສ້າງຖະໜົນ ແລະ ກໍ່ສ້າງອາຄານແຄມຖະໜົນ.
- ເປົ້າໝາຍທີ 6: ທັດສະນີຍະພາບ ແລະ ສິ່ງແວດລ້ອມຕາມເສັ້ນທາງ.

**ມາດຕາ 4 ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ຍານພາຫະນະ ແລະ ຖະໜົນ ສັນຈອນຢູ່ນະຄອນຫຼວງວຽງຈັນ.

## ໝວດທີ II

## ເງື່ອນໄຂຂອງເປົ້າໝາຍແກ້ໄຂອຸປະຕິເຫດ ແລະ ຮັກສາຄວາມປອດໄພຕາມຖະໜົນ ຢູ່ນະຄອນຫຼວງວຽງຈັນ

**ມາດຕາ 5 ເງື່ອນໄຂຂອງຍານພາຫະນະ.**

ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ຕາມມາດຕາ 3 ຂໍ້ທີ 19 ຂອງກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012 ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໄດ້ຂຶ້ນທະບຽນຢ່າງຖືກຕ້ອງ.
2. ມີໃບກວດກາເຕັກນິກ.
3. ກວດກາເຕັກນິກ 2 ປີ/ຄັ້ງ ສຳລັບຍານພາຫະນະໃໝ່ 100% ທີ່ມີອາຍຸການນຳໃຊ້ແຕ່ 4 ປີລົງມາ, 1 ປີ/ຄັ້ງ ສຳລັບຍານພາຫະນະທີ່ມີອາຍຸການນຳໃຊ້ແຕ່ 5 ປີຂຶ້ນໄປ.
4. ມີປະກັນໄພຍານພາຫະນະ.
5. ສຳລັບລົດຕ່ອກໆ ແມ່ນບໍ່ໃຫ້ແລ່ນຕາມຖະໜົນໃນເຂດເທດສະບານ ທີ່ມີການຈະລາຈອນແອອັດ.
6. ສຳລັບລົດໂດຍສານ ຕ້ອງຕິດປ້າຍສັນຍານການຈະລາຈອນ, ລະບຽບ ແລະ ຂໍ້ຫ້າມຕ່າງໆໃສ່ໃນລົດ.
7. ສຳລັບລົດບັນທຸກຂະໜາດ 7 ໂຕນຂຶ້ນໄປ, ລວມທັງລົດໄມ້, ລົດຍົງປູນ, ລົດເກດ, ລົດພວງ ແລະ ລົດບັນທຸກໜັກອື່ນໆ ແມ່ນບໍ່ໃຫ້ແລ່ນໃນເຂດເທດສະບານທີ່ມີການສັນຈອນແອອັດ ໃນເວລາ 07:00-09:00 ໂມງຕອນເຊົ້າ, ໃນເວລາ 11:00-14:00 ໂມງຕອນທ່ຽງ, ໃນເວລາ 16:00-18:00 ໂມງຕອນແລງ, ຍົກເວັ້ນວັນເສົາ, ວັນອາທິດ ແລະ ໄດ້ຮັບອະນຸຍາດ ຈາກທາງການເປັນການສະເພາະ. ສຳລັບໃນວັນທີ່ມີງານໃຫຍ່ສຳຄັນ ແມ່ນໃຫ້ປະຕິບັດຕາມຄຳສັ່ງ ຫຼືແຈ້ງການສະເພາະ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ.

ຍານພາຫະນະທີ່ບໍ່ແລ່ນດ້ວຍເຄື່ອງຈັກ ປະກອບມີ ລົດຖີບສອງລໍ້, ລົດຖີບສາມລໍ້, ກວຽນ, ລໍ້ ແລະ ອື່ນໆທີ່ລາກແກ່, ຊຸກ ຫຼືຍູ້ດ້ວຍຄົນ ຫຼືສັດ ຕາມມາດຕາ 34 ຂອງກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີລະບົບຫ້າມລໍ້, ຕິດແຜ່ນສະທ້ອນແສງໃສ່ທາງໜ້າ, ທາງຫຼັງ ແລະ ທາງຂ້າງ.
2. ຜູ້ນຳໃຊ້ຕ້ອງມີໄຟເຍືອງທາງ ເວລາເດີນທາງໃນຍາມກາງຄືນ.
3. ການສັນຈອນຢູ່ຖະໜົນ ຕ້ອງແນບຂວາສະເໝີ ຍົກເວັ້ນກໍລະນີຈະລ້ຽວຊ້າຍເທົ່ານັ້ນ.
4. ສຳລັບລໍ້ ແລະ ກວຽນທີ່ລາກແກ່ດ້ວຍສັດ ແມ່ນບໍ່ໃຫ້ນຳໃຊ້ຖະໜົນໃນເຂດເທດສະບານ ທີ່ມີການຈະລາຈອນແອອັດ.

**ມາດຕາ 6 ເງື່ອນໄຂຂອງຜູ້ຂັບຂີ່ ຫຼືນຳໃຊ້ຍານພາຫະນະ.**

ຜູ້ຂັບຂີ່ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ໃຫ້ປະຕິບັດເງື່ອນໄຂ ດັ່ງນີ້:

1. ມີໃບຂັບຂີ່ຍານພາຫະນະ ຕາມຂະໜາດຍານພາຫະນະທີ່ຕົນຂັບ.
2. ໃສ່ສາຍຮັດນິລະໄພ, ສຳລັບຜູ້ຂັບຂີ່ລົດຈັກ ຕ້ອງໃສ່ໝວກກັນກະທົບ.

3. ຫ້າມຂັບຂີ່ຍານພາຫະນະສວນທິດທາງ.

4. ຫ້າມຂັບຂີ່ຍານພາຫະນະແຂ່ງຂັນກັນຕາມຖະໜົນ ໂດຍບໍ່ໄດ້ຮັບອະນຸຍາດ.

5. ຫ້າມຂັບຂີ່ຍານພາຫະນະເປັນພຶງເປັນແພ ແລະ ເປັນກຸ່ມແກ້ງກວນເມືອງຕາມຖະໜົນ.

6. ຫ້າມຂັບຂີ່ຍານພາຫະນະໄວເກີນປ້າຍກຳນົດຄວາມໄວ.

7. ຫ້າມຂັບຂີ່ຍານພາຫະນະ ເຂົ້າໄປໃນເຂດສວນສາທາລະນະ ແລະ ສະໜາມຫຼວງແຫ່ງຊາດ.

8. ຫ້າມດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ເສບສິ່ງມຶນເມົາຂັບຂີ່ຍານພາຫະນະ.

9. ຫ້າມນຳໃຊ້ໂທລະສັບ ໃນເວລາຂັບຂີ່ຍານພາຫະນະ.

10. ຫ້າມບັນທຸກສິນຄ້າ, ເຄື່ອງຂອງສູງ, ກ້ວາງ, ຍາວອອກຈາກຍານພາຫະນະ, ບັນທຸກນ້ຳໜັກ ແລະ ຜູ້ໂດຍສານ ເກີນກຳນົດ.

11. ຫ້າມຈອດຍານພາຫະນະຢູ່ຈຸດທີ່ຫ້າມຈອດ.

12. ມີສຸຂະພາບແຂງແຮງ ແລະ ສາຍຕາດີ.

**ມາດຕາ 7 ເງື່ອນໄຂຂອງຜູ້ໂດຍສານ.**

ຜູ້ໂດຍສານໄປນຳຍານພາຫະນະ ໃຫ້ປະຕິບັດເງື່ອນໄຂ ດັ່ງນີ້:

1. ຫ້າມເອົາເຄື່ອງດື່ມທີ່ມີທາດເຫຼົ້າ-ສິ່ງມຶນເມົາ ຂຶ້ນດື່ມ-ເສບ, ສິ່ງສຽງເນືອງນັນ ແລະ ລົບກວນຜູ້ຂັບຂີ່ຍານພາຫະນະ.

2. ຫ້າມສູບຢາໃນຍານພາຫະນະໂດຍສານສາທາລະນະ.

3. ຫ້າມຖິ້ມຂີ້ເຫຍື້ອ ແລະ ສິ່ງເສດເຫຼືອອອກຈາກຍານພາຫະນະ.

4. ຫ້າມນັ່ງເທິງຫຼັງຄາ, ເທິງຫຼັງຄາ ແລະ ແຂວນທ້າຍຍານພາຫະນະ.

5. ໃສ່ສາຍຮັດນິລະໄພ (ຖ້າມີ), ສຳລັບຜູ້ຊ້ອນທ້າຍລົດຈັກ ຕ້ອງໃສ່ໝວກກັນກະທົບ.

6. ປະຕິບັດຕາມຂໍ້ຫ້າມອື່ນໆສຳລັບລົດໂດຍສານ.

**ມາດຕາ 8 ເງື່ອນໄຂຂອງຜູ້ດຳລົງຊີວິດ ແລະ ເຄື່ອນໄຫວຕາມແຄມທາງ.**

1. ຫ້າມຂາຍເຄື່ອງ ແລະ ວາງສິ່ງກີດຂວາງຕາມຖະໜົນ ແລະ ແຄມທາງຍ່າງ.

2. ຍ່າງຖືກຕາມປ້າຍກຳນົດ ແລະ ໄຟສັນຍານ, ສຳລັບຖະໜົນທີ່ບໍ່ມີຂອບທາງຄົນຍ່າງ ໃຫ້ຍ່າງແນບເບື້ອງຊ້າຍປິ່ນໜ້າໃສ່ລົດທີ່ແລ່ນສວນທາງມາສະເໝີ.

3. ປຸກສ້າງເຮືອນ, ຕຶກອາຄານ, ຮ້ານຂາຍເຄື່ອງ ແລະ ສິ່ງກໍ່ສ້າງອື່ນໆ ໃຫ້ຫ່າງຈາກທາງຍ່າງ ຕາມກົດໝາຍວ່າດ້ວຍຜັງເມືອງ ແລະ ກົດໝາຍວ່າດ້ວຍທາງຫຼວງ ກຳນົດ.

4. ປຸກຕົ້ນໄມ້ລຽບຕາມແຄມທາງຍ່າງບ່ອນທີ່ມີເງື່ອນໄຂ ເພື່ອປ້ອງກັນອຸປະຕິເຫດ.

5. ຫ້າມຈອດຍານພາຫະນະຢູ່ຈຸດທີ່ຫ້າມຈອດ.

**ມາດຕາ 9 ເງື່ອນໄຂຂອງຜູ້ກໍ່ສ້າງຖະໜົນ ແລະ ກໍ່ສ້າງອາຄານແຄມຖະໜົນ.**

1. ມີໄຟເຫຼືອງສັນຍານ ແລະ ປ້າຍເຕືອນອັນຕະລາຍມີການກໍ່ສ້າງທາງໜ້າ.

2. ມີຮາວ, ຮົ້ວ, ຝາປິດ ແລະ ສິ່ງກຳບັງອື່ນຢູ່ເຂດທີ່ກຳລັງກໍ່ສ້າງ.

3. ມີຜ້າ, ຕາໜ່າງ, ສິ່ງກຳບັງປົກປິດ ຫຼືອ້ອມເຮືອນ, ຕຶກ, ອາຄານ ທີ່ກຳລັງກໍ່ສ້າງ.

4. ຫ້າມວາງ ຫຼືກອງຫີນ, ຊາຍ, ດິນ ແລະ ວັດສະດຸກໍ່ສ້າງກີດຂວາງຖະໜົນ ແລະ ທາງຄົນຍ່າງ.

5. ຫົດນ້ຳບໍ່ໃຫ້ມີຂີ້ຝຸ່ນໃສ່ຜູ້ສັນຈອນ ແລະ ຜູ້ດຳລົງຊີວິດຢູ່ໃກ້ສະຖານທີ່ກໍ່ສ້າງ.

6. ຫ້າມຖອກນ້ຳເປື້ອນ, ຂີ້ຕົມ, ຂີ້ຝຸ່ນ ແລະ ເສດເຫຼືອການກໍ່ສ້າງໃສ່ຖະໜົນ ແລະ ທາງຍ່າງ.

**ມາດຕາ 10 ເງື່ອນໄຂດ້ານທັດສະນີຍະພາບ ແລະ ສິ່ງແວດລ້ອມຕາມຖະໜົນ.**

1. ສາມາດແນມເຫັນຖະໜົນໄດ້ກ້ວາງໄກ, ບໍ່ມີປ້າຍ, ວັດຖຸກໍ່ສ້າງ, ສິ່ງກໍາບັງອື່ນໆ ທີ່ປິດບັງ ແລະ ລົບກວນສາຍຕາຜູ້ຂັບຂີ່ຍານພາຫະນະ.

2. ທາງແຍກຂອງຖະໜົນ ມີມຸມລ້ຽວຖືກຕາມເຕັກນິກ.

3. ຂີດເສັ້ນທາງ, ມີປ້າຍສັນຍານຈະລາຈອນ, ມີໄຟອໍານາດ, ມີໄຟແສງສະຫວ່າງ.

4. ສ້າງສິ່ງປ້ອງກັນ, ປ້າຍເຕືອນອັນຕະລາຍ ແລະ ແຜ່ນສະທ້ອນແສງ ໃສ່ບ່ອນທີ່ເຄີຍເກີດອຸປະຕິເຫດຫຼາຍ.

## ໝວດທີ III

## ມາດຕະການຫຼຸດຜ່ອນອຸປະຕິເຫດ ແລະ ຮັກສາຄວາມປອດໄພຕາມຖະໜົນ

**ມາດຕາ 11 ມາດຕະການຫຼຸດຜ່ອນອຸປະຕິເຫດ ແລະ ຮັກສາຄວາມປອດໄພຕາມຖະໜົນ ຢູ່ນະຄອນຫຼວງວຽງຈັນ.**

1. ມາດຕະການສຶກສາອົບຮົມ ຕໍ່ເປົ້າໝາຍຜູ້ໃຊ້ລົດ, ໃຊ້ຖະໜົນ.
2. ມາດຕະການຕໍ່ຜູ້ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ເສບສິ່ງມຶນເມົາ ຂັບຂີ່ຍານພາຫະນະ.
3. ມາດຕະການຄວບຄຸມຄວາມໄວການຂັບຂີ່ຍານພາຫະນະ.
4. ມາດຕະການຕໍ່ຜູ້ຂັບຂີ່ຍານພາຫະນະ ທີ່ລະເມີດກົດລະບຽບຈະລາຈອນອື່ນໆ.
5. ມາດຕະການຕໍ່ຜູ້ຂາຍເຄື່ອງດື່ມທີ່ມີທາດເຫຼົ້າ ກ່ອນເວລາ 16:00 ໂມງແລງ.

**ມາດຕາ 12 ມາດຕະການສຶກສາອົບຮົມ ຕໍ່ເປົ້າໝາຍຜູ້ໃຊ້ລົດ, ໃຊ້ຖະໜົນ.**

1. ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ຜົນຮ້າຍຂອງການເກີດອຸປະເຫດຕາມຖະໜົນ ໃຫ້ພະນັກງານ, ທະຫານ, ຕໍາຫຼວດ, ນັກຮຽນ, ນັກສຶກສາ, ກໍາມະກອນ ແລະ ປະຊາຊົນ ຢູ່ບັນດາສໍານັກງານ-ອົງການ, ໂຮງຮຽນ, ໂຮງງານ, ຮາກຖານບ້ານ, ຕາມຖະໜົນ ໂດຍຜ່ານສື່ຕ່າງໆ

2. ປັບປຸງຫຼັກສູດການຮຽນ-ການສອນການຂັບຂີ່ຍານພາຫະນະ ຢູ່ໂຮງຮຽນສອນຂັບຂີ່ຍານພາຫະນະ ແລະ ສ້າງໂຮງຮຽນສອນການຂັບຂີ່ຍານພາຫະນະເພີ່ມ ໃຫ້ໄດ້ມາດຕະຖານແຫ່ງຊາດ ຫຼື ສາກົນ; ເພີ່ມກົດລະບຽບຈະລາຈອນ ເຂົ້າໃນຫຼັກສູດການຮຽນ-ການສອນ ຢູ່ໂຮງຮຽນສາມັນສຶກສາ.

3. ປັບປຸງສູນບໍລິການກວດກາເຕັກນິກຍານພາຫະນະຂອງລັດ ແລະ ເອກະຊົນ, ຂະຫຍາຍສູນບໍລິການກວດກາເຕັກນິກຍານພາຫະນະເພີ່ມ ຢູ່ບັນດາເມືອງໃຫ້ໄດ້ມາດຕະຖານແຫ່ງຊາດ ຫຼື ສາກົນ.

**ມາດຕາ 13 ມາດຕະການຕໍ່ຜູ້ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ເສບສິ່ງມຶນເມົາ ຂັບຂີ່ຍານພາຫະນະ.**

1. ຫ້າມຜູ້ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ເສບສິ່ງມຶນເມົາຂັບຂີ່ຍານພາຫະນະ, ຫ້າມຜູ້ຂັບຂີ່ຍານພາຫະນະດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ເສບສິ່ງມຶນເມົາ (**<u>ດື່ມບໍ່ຂັບ, ຂັບບໍ່ດື່ມ</u>**) ຕາມມາດຕາ 55 ຂອງກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສະບັບເລກທີ 54/ສພຊ, ລົງວັນທີ 19 ທັນວາ 2014.

2. ປະຕິບັດມາດຕະການ**<u>ຊ່ວຍເຫຼືອຜູ້ມຶນເມົາ ດ້ວຍການຕັ້ງຈຸດຊຸ່ມກວດກາ, ນໍາໃຊ້ເຄື່ອງກວດວັດທາດເຫຼົ້າ</u>** ແລະ ສິ່ງມຶນເມົາຕໍ່ຜູ້ຂັບຂີ່ຍານພາຫະນະ ຢູ່ຕາມຖະໜົນ ແລະ ສະຖານບັນເທີງ (ຂາອອກ) ແລະ ຊ່ວຍນໍາສົ່ງຜູ້ກ່ຽວກັບສະຖານທີ່ພັກ.

3. ເມື່ອກວດພົບທາດເຫຼົ້າ ແລະ ສິ່ງມຶນເມົາ ໃນຮ່າງກາຍຂອງຜູ້ຂັບຂີ່ຍານພາຫະນະເກີນປະລິມານ ທີ່ກໍານົດໄວ້ໃນ ມາດຕາ 20 ຂອງກົດໝາຍ ວ່າດ້ວຍການຈະລາຈອນທາງບົກ ໃຫ້ປະຕິບັດມາດຕະການຕໍ່ຜູ້ຂັບຂີ່ທີ່ລະເມີດ ດັ່ງນີ້:

- ຄັ້ງທີ 1: ຂຽນໃບຮັບສາລະພາບລະເມີດກົດຈະລາຈອນ, ກັກໃບຂັບຂີ່ 1 ເດືອນ ແລະ ປັບໃໝຕໍ່າສຸດ ຕາມມາດຕາ 5 ຂອງດໍາລັດ ເລກທີ 188/ນຍ, ລົງວັນທີ 03 ກໍລະກົດ 2007 ແລະ ຕາມມາດຕາ 02 ຂອງມະຕິ

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ 028/ສປນວ, ລົງວັນທີ 06 ກັນຍາ 2018.

- ຄັ້ງທີ 2: ຂຽນໃບຮັບສາລະພາບລະເມີດກົດຈະລາຈອນ, ກັກໃບຂັບຂີ່ 3 ເດືອນ ແລະ ປັບໃໝ 10 ເທົ່າ ຕາມມາດຕາ 5 ຂອງດຳລັດເລກທີ 188/ນຍ ແລະ ຕາມມາດຕາ 02 ຂອງມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ 028/ສປນວ, ລົງວັນທີ 06 ກັນຍາ 2018.

- ຄັ້ງທີ 3: ຂຽນໃບຮັບສາລະພາບລະເມີດກົດຈະລາຈອນ, ກັກໃບຂັບຂີ່ 6 ເດືອນ ຫາ 1 ປີ ແລະ ປັບໃໝ 20 ເທົ່າ ຕາມມາດຕາ 5 ຂອງດຳລັດເລກທີ 188/ນຍ ແລະ ຕາມມາດຕາ 02 ຂອງມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ 028/ສປນວ, ລົງວັນທີ 06 ກັນຍາ 2018.

- ຄັ້ງທີ 4: ຂຽນໃບຮັບສາລະພາບລະເມີດກົດຈະລາຈອນ, ຍຶດໃບຂັບຂີ່ເລີຍ ຣອດ 1 ປີ ຈຶ່ງອະນຸຍາດໃຫ້ເສັງໃບຂັບຂີ່ຄືນໃໝ່ ແລະ ປັບໃໝ 20 ເທົ່າ ຕາມມາດຕາ 5 ຂອງດຳລັດເລກທີ 188/ນຍ ແລະ ຕາມມາດຕາ 02 ຂອງມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ 028/ສປນວ, ລົງວັນທີ 06 ກັນຍາ 2018.

- ກໍລະນີຜູ້ຂັບຂີ່ຍານພາຫະນະ ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ເສບສິ່ງມຶນເມົາ ເປັນຕົ້ນເຫດພາໃຫ້ເກີດອຸປະຕິເຫດ ແມ່ນໃຫ້ນຳໃຊ້ມາດຕະການສູງສຸດ ຕາມຄັ້ງທີ 4 ຂ້າງເທິງນີ້ ແລະ ດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງ, ຖ້າບໍ່ໄດ້ເປັນຕົ້ນເຫດ ກໍ່ໃຫ້ນຳໃຊ້ມາດຕະການ ຕາມລຳດັບຂ້າງເທິງນີ້.

**ມາດຕາ 14 ມາດຕະການຄວບຄຸມຄວາມໄວການຂັບຂີ່ຍານພາຫະນະ.**

1. ຫ້າມຂັບຂີ່ຍານພາຫານະໄວ ເກີນປ້າຍກຳນົດຄວາມໄວ ຕາມມາດຕາ 19 ຂອງກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012.

2. ຕິດຕັ້ງປ້າຍກຳນົດຄວາມໄວການຂັບຂີ່ຍານພາຫະນະ ໃຫ້ຈະແຈ້ງ ແລະ ເຫັນໄດ້ງ່າຍ.

3. ຕິດຕັ້ງກ້ອງວົງຈອນປິດຈັບຄວາມໄວ, ຕັ້ງຈຸດກວດກາຄວາມໄວ ແລະ ນຳໃຊ້ເຄື່ອງຈັບຄວາມໄວຍານພາຫະນະ.

4. ເມື່ອກວດພົບຜູ້ຂັບຂີ່ຍານພາຫະນະ ໄວເກີນປ້າຍກຳນົດຄວາມໄວ ແມ່ນໃຫ້ປະຕິບັດມາດຕະການຕໍ່ຜູ້ຂັບຂີ່ທີ່ລະເມີດແຕ່ລະຄັ້ງ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 13 ຂໍ້ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 15 ມາດຕະການຕໍ່ຜູ້ຂັບຂີ່ຍານພາຫະນະ ທີ່ລະເມີດກົດລະບຽບຈະລາຈອນອື່ນໆ.**

ຕໍ່ຜູ້ຂັບຂີ່ຍານພາຫະນະ ທີ່ລະເມີດກົດລະບຽບຈະລາຈອນອື່ນໆ ໃຫ້ກວດກາ ແລະ ປະຕິບັດມາດຕະການດັ່ງນີ້:

1. ກວດກາໃບຂັບຂີ່ຍານພາຫະນະ.

2. ກວດກາໃບກວດກາເຕັກນິກຍານພາຫະນະ.

3. ກວດກາການລະເມີດກົດລະບຽບຈະລາຈອນອື່ນໆ.

4. ເມື່ອກວດພົບຜູ້ຂັບຂີ່ຍານພາຫະນະ ລືມໃບຂັບຂີ່ຍານພາຫະນະ ຫຼື ລືມໃບກວດກາເຕັກນິກຍານພາຫະນະ ແມ່ນໃຫ້ສຶກສາອົບຮົມກ່າວເຕືອນ.

5. ເມື່ອກວດພົບຜູ້ຂັບຂີ່ຍານພາຫະນະ ບໍ່ມີໃບຂັບຂີ່ຍານພາຫະນະ, ບໍ່ມີໃບກວດກາເຕັກນິກຍານພາຫະນະ ແມ່ນໃຫ້ສຶກສາອົບຮົມກ່າວເຕືອນ, ແນະນຳໃຫ້ໄປເສັງໃບຂັບຂີ່ ແລະ ປັບໃໝ 10 ເທົ່າ ຕາມມາດຕາ 29 ຂອງດຳລັດ 188/ນຍ.

**ມາດຕາ 16 ມາດຕະການຕໍ່ຜູ້ຂາຍເຄື່ອງດື່ມທີ່ມີທາດເຫຼົ້າ ກ່ອນເວລາ 16:00 ໂມງແລງ.**

1. ບໍ່ໃຫ້ຂາຍເຄື່ອງດື່ມທີ່ມີທາດເຫຼົ້າ ກ່ອນເວລາ 16:00 ໂມງແລງ ຕາມມາດຕາ 30 ຂອງກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສະບັບເລກທີ 54/ສພຊ, ລົງວັນທີ 19 ທັນວາ 2014 ກຳນົດໄວ້.

2. ໃຫ້ເລີ່ມກວດກາ ແລະ ປັບໃໝ ນັບແຕ່ວັນທີ 01 ກໍລະກົດ 2019 ເປັນຕົ້ນໄປ, ອັດຕາການປັບໃໝ ໃຫ້ປະຕິບັດຕາມກົດໝາຍ, ລັດຖະບັນຍັດ, ດຳລັດ ແລະ ມະຕິສະພາປະຊາຊົນນະຄອນຫຼວງວຽງຈັນ ກຳນົດໄວ້.

**ມາດຕາ 17 ການຈັດຕັ້ງປະຕິບັດມາດຕະການເພີ່ມ ຕໍ່ພະນັກງານ-ລັດຖະກອນຂອງລັດ ທີ່ລະເມີດກົດລະບຽບຈະລາຈອນ.**

ສຳລັບພະນັກງານ-ລັດຖະກອນຂອງພັກ-ລັດ ທີ່ລະເມີດມາດຕະການ ທີ່ໄດ້ກຳນົດໄວ້ໃນມາດຕາ 13, 14 15 ແລະ ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ແມ່ນໃຫ້ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ແຈ້ງໃຫ້ການຈັດຕັ້ງຂອງຜູ້ກ່ຽວສັງກັດ ຮັບຊາບ ແລະ ສຶກສາອົບຮົມ ຫຼື ປະຕິບັດວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

## ໝວດທີ IV
## ອົງການຈັດຕັ້ງປະຕິບັດ

**ມາດຕາ 18 ອົງການຈັດຕັ້ງປະຕິບັດ.**

ອົງການຈັດຕັ້ງປະຕິບັດ ປະກອບມີ:

1. ອົງການປົກຄອງນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງ ແລະ ອົງການປົກຄອງບ້ານ.
2. ກົມຈະລາຈອນ ກະຊວງປ້ອງກັນຄວາມສະຫງົບ.
3. ກອງບັນຊາການປ້ອງກັນຄວາມສະຫງົບ (ປກສ) ນະຄອນຫຼວງວຽງຈັນ ແລະ ປກສ ເມືອງ.
4. ພະແນກໂຍທາທິການ ແລະ ຂົນສົ່ງ (ຍທຂ) ນະຄອນຫຼວງວຽງຈັນ ແລະ ຫ້ອງການ ຍທຂ ເມືອງ.

**ມາດຕາ 19 ໜ້າທີ່ຂອງອົງການປົກຄອງ ຂັ້ນຕ່າງໆ.**

1. ອົງການປົກຄອງນະຄອນຫຼວງວຽງຈັນ ເປັນຜູ້ປະກາດນຳໃຊ້ມາດຕະການຕາມກົດໝາຍ, ອອກລະບຽບການເພີ່ມຕື່ມຕາມຄວາມຈຳເປັນ ແລະ ເໝາະສົມ, ອຳນວຍຄວບຄຸມ ແລະ ຕິດຕາມກວດກາຢ່າງລວມສູນໃນທົ່ວນະຄອນຫຼວງວຽງຈັນ, ຈັດສັນ ແລະ ລະດົມທຶນຮັບໃຊ້ການຈັດຕັ້ງປະຕິບັດ, ແຕ່ງຕັ້ງຄະນະຮັບຜິດຊອບກວດກາປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

2. ອົງການປົກຄອງເມືອງ ຊ່ວຍອົງການປົກຄອງນະຄອນຫຼວງວຽງຈັນ ໃນການອຳນວຍຄວບຄຸມ ແລະ ຕິດຕາມກວດກາຢ່າງລວມສູນໃນທົ່ວເມືອງຂອງຕົນ, ຈັດສັນ ແລະ ລະດົມທຶນສົມທົບຮັບໃຊ້ການຈັດຕັ້ງປະຕິບັດ ແຕ່ງຕັ້ງຄະນະຮັບຜິດຊອບກວດກາປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢູ່ພາຍໃນເມືອງຂອງຕົນ.

3. ອົງການປົກຄອງບ້ານ ຊ່ວຍອົງການປົກຄອງເມືອງ ຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດ ຢູ່ພາຍໃນບ້ານຂອງຕົນ.

**ມາດຕາ 20 ສິດ ແລະ ໜ້າທີ່ ກົມຈະລາຈອນ ກະຊວງປ້ອງກັນຄວາມສະຫງົບ.**

ກົມຈະລາຈອນ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ບັນຊາອຳນວຍຄວບຄຸມ, ລະບາຍການສັນຈອນ, ຈັດສັນຄວາມເປັນລະບຽບຮຽບຮ້ອຍ, ແກ້ໄຂອຸປະຕິເຫດຕາມຖະໜົນ ຕາມການແບ່ງຂັ້ນຄຸ້ມຄອງ ກັບກອງບັນຊາການ ປກສ ນະຄອນຫຼວງວຽງຈັນ; ຕິດຕາມກວດກາ, ປັບໃໝຜູ້ລະເມີດ ແລະ ປະເມີນຜົນການຈັດຕັ້ງປະຕິບັດມາດຕະການ ໃນມາດຕາ 11, 12, 13, 14 ແລະ 15 ຂອງຂໍ້ຕົກລົງສະບັບນີ້ ຕາມຖະໜົນ ແລະ ສະຖານທີ່ສາທາລະນະ ຢູ່ນະຄອນຫຼວງວຽງຈັນ; ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ຜົນຮ້າຍຂອງການເກີດອຸປະເຫດຕາມຖະໜົນ; ລາຍງານສະພາບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງຕົນ ໃຫ້ກະຊວງປ້ອງກັນຄວາມສະຫງົບ ຊາບຢ່າງເປັນປົກກະຕິ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນຕ່າງໆ.**

1. ສິດ ແລະ ໜ້າທີ່ ຂອງກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ເປັນຜູ້ບັນຊາອຳນວຍຄວບຄຸມ, ລະບາຍການສັນຈອນ, ຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມຖະໜົນ, ແກ້ໄຂອຸປະຕິເຫດ; ຕິດຕາມກວດກາ, ປັບໃໝຜູ້ລະເມີດ ແລະ ປະເມີນຜົນການຈັດຕັ້ງປະຕິບັດມາດຕະການ ໃນມາດຕາ 11, 12, 13, 14 ແລະ 15 ຂອງຂໍ້ຕົກລົງສະບັບນີ້ ຕາມຖະໜົນ ແລະ ສະຖານທີ່ສາທາລະນະ ຢູ່ນະຄອນຫຼວງວຽງຈັນ; ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ຜົນຮ້າຍຂອງການເກີດອຸປະເຫດຕາມຖະໜົນ; ລາຍງານສະພາບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງຕົນ ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ຊາບຢ່າງເປັນປົກກະຕິ.

2. ສິດ ແລະ ໜ້າທີ່ ກອງບັນຊາການ ປກສ ເມືອງ ຊ່ວຍກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ໃນການອຳນວຍຄວບຄຸມ, ລະບາຍການສັນຈອນ, ຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມຖະໜົນ, ແກ້ໄຂອຸປະຕິເຫດ; ຕິດຕາມກວດກາ, ປັບໃໝຜູ້ລະເມີດ ແລະ ປະເມີນຜົນການຈັດຕັ້ງປະຕິບັດມາດຕະການ ໃນມາດຕາ 11, 12, 13, 14 ແລະ 15 ຂອງຂໍ້ຕົກລົງສະບັບນີ້ ຕາມຖະໜົນ ແລະ ສະຖານທີ່ສາທາລະນະ ຢູ່ເມືອງ; ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ຜົນຮ້າຍຂອງການເກີດອຸປະເຫດຕາມຖະໜົນ; ລາຍງານສະພາບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງຕົນ ໃຫ້ອົງການປົກຄອງເມືອງຂອງຕົນ ແລະ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ຊາບຢ່າງເປັນປົກກະຕິ.

3. ສິດ ແລະ ໜ້າທີ່ ຂອງ ປກສ ບ້ານ ຊ່ວຍກອງບັນຊາການ ປກສ ເມືອງ ລະບາຍການສັນຈອນ, ຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມທາງຮ່ອມ ແລະ ສະຖານທີ່ສາທາລະນະ ຢູ່ບ້ານ, ຊ່ວຍແຈ້ງອຸປະຕິເຫດ, ຊ່ວຍປ້ອງກັນຍານພາຫະນະ ແລະ ສະຖານທີ່ເກີດອຸປະຕິເຫດ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງໂຍທາທິການ ແລະ ຂົນສົ່ງ ຂັ້ນຕ່າງໆ:**

1. ສິດ ແລະ ໜ້າທີ່ ຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ເປັນຜູ້ປັບປຸງ ແລະ ກໍ່ສ້າງຖະໜົນ, ສິ່ງອຳນວຍຄວາມສະດວກ ແລະ ສິ່ງແວດລ້ອມທີ່ດີຕາມຖະໜົນ ເຊັ່ນ: ຂີດ-ແຕ້ມເສັ້ນທາງສັນຈອນ, ຕິດຕັ້ງປ້າຍສັນຍານຈະລາຈອນ, ໄຟອຳນາດ ແລະ ຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍຕາມຖະໜົນ ແລະ ທາງຍ່າງ; ຄຸ້ມຄອງ, ປັບປຸງ ແລະ ກໍ່ສ້າງໂຮງຮຽນສອນຂັບຂີ່ຍານພາຫະນະ, ສູນບໍລິການກວດກາເຕັກນິກຍານພາຫະນະ; ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ຜົນຮ້າຍຂອງການເກີດອຸປະເຫດຕາມຖະໜົນ; ລາຍງານສະພາບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງຕົນ ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ຊາບຢ່າງເປັນປົກກະຕິ.

2. ສິດ ແລະ ໜ້າທີ່ ຂອງຫ້ອງການ ຍທຂ ເມືອງ ເປັນຜູ້ປັບປຸງ ແລະ ກໍ່ສ້າງຖະໜົນ, ສິ່ງອຳນວຍຄວາມສະດວກ ແລະ ສິ່ງແວດລ້ອມທີ່ດີຕາມຖະໜົນ ເຊັ່ນ: ຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍຕາມຖະໜົນ ແລະ ທາງຍ່າງ ທີ່ເມືອງຄຸ້ມຄອງ; ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ຜົນຮ້າຍຂອງການເກີດອຸປະເຫດຕາມຖະໜົນ; ລາຍງານສະພາບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງຕົນ ໃຫ້ອົງການປົກຄອງເມືອງຂອງຕົນ ແລະ ພະແນກ ຍທຂ ນະຄອນຫຼວງວຽງຈັນ ຊາບຢ່າງເປັນປົກກະຕິ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງຫ້ອງການ-ອົງການຈັດຕັ້ງພັກ-ລັດ ອ້ອມຂ້າງສູນກາງ, ພະແນກການ-ອົງການຈັດຕັ້ງພັກ-ລັດ ຂອງນະຄອນຫຼວງວຽງຈັນ, ເມືອງ ແລະ ສື່ມວນຊົນ.**

1. ຫ້ອງການ-ອົງການຈັດຕັ້ງພັກ-ລັດ ອ້ອມຂ້າງສູນກາງ ປຸກລະດົມ ແລະ ສຶກສາອົບຮົມພະນັກງານ-ລັດຖະກອນ ອ້ອມຂ້າງຂະແໜງການຂອງຕົນ ປະຕິບັດມາດຕະການຫຼຸດຜ່ອນອຸປະຕິເຫດ ແລະ ຮັກສາຄວາມປອດໄພຕາມຖະໜົນ, ພິຈາລະນາບັນຫາຄວາມກ້າວໜ້າຂອງພະນັກງານ-ລັດຖະກອນຂອງຕົນ ທີ່ລະເມີດມາດຕະການດັ່ງກ່າວ.

2. ພະແນກການ-ອົງການຈັດຕັ້ງພັກ-ລັດ ຂອງນະຄອນຫຼວງວຽງຈັນ ແລະ ເມືອງ ປຸກລະດົມ ແລະ ສຶກສາອົບຮົມພະນັກງານ-ລັດຖະກອນ ອ້ອມຂ້າງຂະແໜງການ ແລະ ເມືອງຂອງຕົນ ປະຕິບັດມາດຕະການຫຼຸດຜ່ອນ

ອຸປະຕິເຫດ ແລະ ຮັກສາຄວາມປອດໄພຕາມຖະໜົນ, ພິຈາລະນາບັນຫາຄວາມກ້າວໜ້າຂອງພະນັກງານ-ລັດຖະກອນຂອງຕົນ ທີ່ລະເມີດມາດຕະການດັ່ງກ່າວ.

3. ສົ່ມວນຊົນ ໂຄສະນາເຜີຍແຜ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ລວມທັງຜົນຮ້າຍຂອງການເກີດອຸປະເຫດຕາມຖະໜົນ.

## ໝວດທີ V
## ການຄຸ້ມຄອງລາຍຮັບ-ລາຍຈ່າຍ ວຽກງານການແກ້ໄຂອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນ ຢູ່ນະຄອນຫຼວງວຽງຈັນ

**ມາດຕາ 24 ແຫຼ່ງລາຍຮັບ:**

ແຫຼ່ງລາຍຮັບສໍາລັບຮັບໃຊ້ວຽກງານການແກ້ໄຂອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນຢູ່ນະຄອນຫຼວງວຽງຈັນ ແມ່ນໄດ້ມາຈາກ:

1. ກອງທຶນທາງ ພູດຂອງນະຄອນຫຼວງວຽງຈັນ ໃນບ້ອງ 2,5% ຂອງການຮັກສາຄວາມປອດໄພຕາມຖະໜົນ ຕາມມາດຕາ 5 ຂໍ້ 4 ຂອງດໍາລັດວ່າດ້ວຍກອງທຶນທາງ ສະບັບເລກທີ 130/ລບ, ລົງວັນທີ 01 ມີຖຸນາ 2016.

2. ເງິນທີ່ໄດ້ຈາກການປັບໃໝ ໃຫ້ແບ່ງ 60% ເຂົ້າລາຍຮັບງົບປະມານ ແລະ 40% ຮັບໃຊ້ວຽກງານແກ້ໄຂອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນ ຢູ່ນະຄອນຫຼວງວຽງຈັນ ຄືກັບມາດຕາ 3 ຂໍ້ 2 ຂອງຂໍ້ຕົກລົງຂອງຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 0025/ກງ, ລົງວັນທີ 05 ມັງກອນ 2017.

3. ລາຍຮັບວິຊາການ ຂອງພະແນກ ຍທຂ ແລະ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ, ຂອງຫ້ອງການ ຍທຂ ແລະ ກອງບັນຊາການ ປກສ ເມືອງ ຕາມແຜນອະນຸມັດໃຫ້ຈັດຮັບ-ຈັດຈ່າຍ ເຂົ້າໃນການແກ້ໄຂອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນ ໃນແຕ່ລະປີ.

4. ການປະກອບສ່ວນຈາກສັງຄົມ ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 25 ລາຍຈ່າຍ:**

1. ຈ່າຍຊ່ວຍໜູນໃຫ້ພະນັກງານສັງກັດລັດ ທີ່ລົງປະຕິບັດໜ້າທີ່ຢູ່ຮາກຖານ ຈໍານວນເຄິ່ງໜຶ່ງຂອງອັດຕາການລົງຮາກຖານ ທີ່ທາງການອະນຸມັດ.

2. ຈ່າຍສິ່ງເສີມໃຫ້ພະນັກງານອາສາສະໝັກ ທີ່ປະຕິບັດໜ້າທີ່ຊ່ວຍເຈົ້າໜ້າທີ່ຂອງລັດ ໃນຍາມຈໍາເປັນ.

3. ຈັດແບ່ງລາຍຈ່າຍຕາມເປົ້າໝາຍແກ້ໄຂສາເຫດຂອງອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນ, ລະບາຍການສັນຈອນ, ຂີດ-ແຕ້ມເສັ້ນຖະໜົນ, ຕິດຕັ້ງປ້າຍສັນຍານຈະລາຈອນຕ່າງໆ.

4. ຈ່າຍຝຶກອົບຮົມຜູ້ຂັບຂີ່, ພິມເອກະສານຕ່າງໆ.

5. ຈ່າຍປັບປຸງທັດສະນີຍະສະພາບ ແລະ ສິ່ງແວດລ້ອມຂອງຖະໜົນ.

6. ຈ່າຍຄ່າເຊົ່າຍານພາຫະນະ ເກັບກູ້ແກ້ໄຂອຸປະຕິເຫດ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳທີ່ກ່ຽວຂ້ອງອື່ນໆ ແລະ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມລະບຽບການ.

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ.**

1. ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເມີນເສີຍບໍ່ເຂົ້າຮ່ວມ ຫຼື ມີພຶດຕິກຳກະທຳຜິດຕໍ່ການຈັດຕັ້ງປະຕິບັດມາດຕະການຂອງກົດໝາຍ, ນິຕິກຳກ່ຽວຂ້ອງອື່ນໆ ແລະ ຂໍ້ຕົກລົງສະບັບນີ້ ໃຫ້ດຳເນີນມາດຕະການຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງກຳນົດ.

2. ຕໍ່ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ໆປະຕິບັດວຽກງານ ທີ່ເມີນເສີຍບໍ່ເຂົ້າຮ່ວມ ຫຼື ມີພຶດຕິກຳກະທຳຜິດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳກ່ຽວຂ້ອງອື່ນໆ ແລະ ຂໍ້ຕົກລົງສະບັບນີ້ ແລະ ກໍ່ຄວາມເສຍຫາຍ, ຫຼືບຫຼີກຈາກຄວາມຜິດຂອງຕົນ ຈະຖືກປະຕິບັດວິໄນຕາມລະບຽບການ, ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ກົດໝາຍວ່າດ້ວຍກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫຼື ຖືກດຳເນີນຄະດີຕາມລະບຽບການເບົາ ຫຼື ໜັກ ຕາມກົດໝາຍກ່ຽວຂ້ອງກຳນົດ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ.**

1. ພະແນກການ, ອົງການທຽບເທົ່າພະແນກ ຂັ້ນນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້, ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຕາມຖະໜົນ ຢູ່ນະຄອນຫຼວງວຽງຈັນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມືຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 29 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ເອົາລົງໃນຈົດໝາຍເຫດທາງລັດຖະການ ຫຼືເອົາລົງໃນເວັບໄຊ ຂອງນະຄອນຫຼວງວຽງຈັນ 15 ວັນ ເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ປອ.ສິນລະວົງ ຄຸດໄພທູນ

<u>ບ່ອນສົ່ງ:</u>

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ນວ ທ່ານລະ | 01 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ; |
| - ຄະນະເລຂາທິການ ສະພາແຫ່ງຊາດ | 01 ສະບັບ; |
| - ກະຊວງ-ອົງການພັກ-ລັດທຽບເທົ່າກະຊວງ ບ່ອນລະ | 01 ສະບັບ; |
| - ສະພາປະຊາຊົນ ນວ | 01 ສະບັບ; |
| - ກອງບັນຊາການ ປກສ ນວ, ປກສ ເມືອງ ບ່ອນລະ | 01 ສະບັບ; |
| - ພະແນກການ, ອົງການລັດທຽບເທົ່າ ຂັ້ນ ນວ ບ່ອນລະ | 01 ສະບັບ; |
| - ບັນດາເມືອງໆລະ | 01 ສະບັບ; |
| - ເກັບມ້ຽນສຳເນົາ | 02 ສະບັບ. |